ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ 013/ທຄຕລ

ນະຄອນຫຼວງວຽງຈັນ 05 FEB 2020

ເຖິງ : ບັນດາ ບໍລິສັດ , ວິສາຫະກິດ ຢູ່ນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ

ເລື່ອງ : ຂໍເຊື້ອເຊີນ ຍື່ນເອກະສານປະມູນຕິດຕັ້ງລະບົບລະບາຍອາກາດ ແລະ ເຄື່ອງຟອກອາກາດ ໃສ່ຫ້ອງ ຄັງສາງ ສາຂາໄຊຍະບູລີ, ໜ່ວຍບໍລິການປາກລາຍ, ໜ່ວຍບໍລິການແກ່ນທ້າວ, ໜ່ວຍບໍລິການຫົງສາ, ໜ່ວຍບໍລິການເມືອງພຽງ, ສາຂາ ວັງວຽງ, ໜ່ວຍບໍລິການກາສີ, ສາຂາ ຊຽງຂວາງ, ໜ່ວຍບໍລິການ ຕະຫຼາດນ້ຳຫງຳ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງບັນດາ ບໍລິສັດ ແລະ ວິສາຫະກິດ ທີ່ປະກອບການຕິດຕັ້ງເຄື່ອງລະບົບລະບາຍອາກາດ ແລະ ເຄື່ອງຟອກອາກາດ ທີ່ມີຄວາມສົນໃຈຍື່ນຊອງປະມູນລາຄາ ເຊິ່ງເງື່ອນໄຂປະກອບເອກະສານດັ່ງນີ້ :

ຊອງທີ 1 ເອກະສານດ້ານຄຸນວຸດທິຂອງ ບໍລິສັດ

- ໃບອະນຸຍາດດຳເນີນທຸລະກິດ ປີປະຈຸບັນ
- ໃບທະບຽນອາກອນປະຈຳປີ
- ໃບທະບຽນວິສາຫະກິດ
- ປະສົບການ ບໍລິສັດ ພ້ອມອອກແບບລະບົບລະບາຍອາກາດ ເຄື່ອງຟອກອາກາດໃສ່ ຍີ່ຫໍ້ ELECTROLUX ລຸ້ນ EAC 415 ຫຼື ຍີ່ຫໍ້ອື່ນທີ່ເຮັດໜ້າທີ່ຄ້າຍຄືກັນ ຫຼື ເຮັດໜ້າທີ່ໄດ້ດີກວ່າ

ຊອງທີ 2 ເອກະສານສະເໜີລາຄາ ສະກຸນເງິນກີບ

ສ່ວນລາຍລະອຽດຂະໜາດຂອງຫ້ອງຄັງສາງ ແລະ ໜ່ວຍບໍລິການມີເອກະສານຄັດຕິດພ້ອມ

ໝາຍເຫດ : ກະລຸນາສົ່ງໃບສະເໜີລາຄາ (ປິດຊອງ) ໃຫ້ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ກ່ອນວັນທີ 28/02/2020 .

ຮ.ຜູ້ອຳນວຍການໃຫຍ່

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ລ. [signature]

ລາໃຈ ຄັນພຣະວົງສ໌

ຕິດຕໍ່ພົວພັນ: ທ່ານ ພູວອນ ສໍອິນໄຊ ເບີໂທ 59559889

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ. 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA